ປຶ້ມຄູ່ມື

# ຂັບ-ລຳທ້ອງຖິ່ນ

(ສະບັບທົດລອງ)


ແຕ່ງໂດຍ: ອຈ ໂພໄຊ ຈັນທະວົງສາ

ພິມ ແລະ ຈັດໜ້າໂດຍ: ນ ມະນີວັນ ສີພອນໄຊ

ອອກແບບໜ້າປົກໂດຍ: ທ ວັດທະນາ ສີວິໄຊ



ສູນອົບຮົມຮ່ວມພັດທະນາ

ສຮພ

PADETC

2008

www.padetc.org

www.padetc.org

## *ລຳລ່ອງ: " ນີ້ລະຈຶ່ງສົມຊື່ວ່າຄົນ "*

ໂອຍ...ຄົນເອີຍຄົນໆນີ້ ຄົນມີຫຼາຍຢ່າງເດີ້ລະນາງ ຄົນເອີຍຄົນ
ຄົນຮູ້ເຮັດຮູ້ສ້າງຈຶ່ງສົມຊັ້ນຊື່ວ່າຄົນ(2)ໂອຍ......ນັ້ນນາ

| | |
|---|---|
| ລະຄຳວ່າຄົນນັ້ນໄດ້ | ເປັນຊື່ແສນສູງ |
| ຄົນມີຫຼາຍແນວພັນ | ຕ່າງກັນເຫຼືອລົ້ນ |
| ບາງຄົນໄວຫານກ້າ | ແຕ່ປັນຍາບໍ່ໃສສ່ອງ |
| ບາງຄົນພັດກຽດຄ້ານ | ການບ້ານກະບໍ່ເປັນ |
| ບາງຄົນມັກທ່ຽວຫລິ້ນ | ກາງຄ່ຳກາງຄືນ |
| ບາງຄົນບຸກບືນຕົວ | ຮ່ຳຮຽນຂຽນແຕ້ມ |
| ບາງຄົນແນມເຫັນໄດ້ | ອະນາຄົດສົດໃສຂອງຕົນເອງ ໄວ້ກ່ອນ |
| ບາງຄົນສອນກະບໍ່ໄດ້ | ສະໝອງຕື້ບອດວິຊາ |
| ນີ້ລະນໍເພິ່ນເວົ້າ | ສົມຊື່ແນວຄົນ |
| ສົນລະວົນຫຼາຍປະການ | ບໍ່ອາດພັນລະນາໄດ້ |
| ແຕ່ເປັນຄົນຄວນໃຫ້ | ສຶກສາໄປໃຫ້ໄດ້ດີເດັ່ນ |
| ເປັນແວ່ນແຍງຮອບດ້ານ | ໃຫ້ຊາວບ້ານຊື່ນຊົມ |
| ນັ້ນຈຶ່ງສົມຊາດເຊື້ອ | ແນວໜໍ່ນາມຄົນ |
| ຂໍໃຫ້ພຽນສຶກສາ | ໃຫ້ເກັ່ງດີຫຼາຍດ້ານ |
| ພ້ອມທັງມີໃຈເກື້ອ | ຈຸນເຈືອຊ່ວຍຜູ້ອື່ນ |
| ຈຶ່ງຈະສົມຊື່ແທ້ | ເປັນຫຼານຫຼ້າຜູ້ເດັ່ນດີ ເດີລະ ນາງເອີຍ...ນາ |



## ຄຳນຳ

ປຶ້ມຄູ່ມື"ຂັບ-ລຳທ້ອງຖິ່ນ" ເຫລັ້ມນີ້ແມ່ນການແຕ່ງຂອງ ອຈ ໂພໄຊ ຈັນທະວົງສາຊຶ່ງຂຽນຂຶ້ນໂດຍມີຈຸດປະສົງໃຫ້ຄູເຝິກ ແລະ ຄູສອນແຕ່ລະວຽກນຳໄປສິດສອນເດັກໃນຂອບເຂດທີ່ຕົນເອງຮັບຜິດຊອບ ຊຶ່ງຈະເປັນການປູກຈິດສຳນຶກທີ່ດີໃນການອະນຸລັກຮັກສາວັດທະນາທຳແຕ່ລະທ້ອງຖິ່ນໃນລາວເຮົາໄວ້ໃຫ້ຍືນຍົງຕໍ່ໄປ.

ຄະນະຈັດທຳຄິດວ່າປຶ້ມເຫລັ້ມນີ້ພ້ອມທັງແຜ່ນ CD ຈະເປັນບ່ອນອີງໃນການສອນຂັບ-ລຳ ແລະ ກ້າວໄປຫາການແຕ່ງຂັບ-ລຳຕາມເນື້ອໃນທີ່ທ່ານຕ້ອງການໄດ້ອີກດ້ວຍ.

ພ້ອມກັນນີ້ຄະນະຈັດທຳຕ້ອງຂໍອະໄພໃນສິ່ງທີ່ຂາດຕົກບົກພ່ອງໃນການແຕ່ງ-ການຂັບລຳມາຍັງທຸກໆທ່ານ.

ຄະນະຈັດທຳ

## *ສາລະບານ*

1. ລຳເພີນ: ຫ່ວງເພື່ອນ.......................................1
2. ລຳເຕີ້ຍ: ຕັ້ງໃຈໄວ້ຫັ້ນແຫລະດີ ............................2
3. ລຳພູ່ໄທ: ຈົ່ງຮັກໃນການຮຽນ................................3
4. ລຳສາລະວັນ: ຮຽນແລ້ວຮຽນອີກ............................4
5. ລຳເດີນ: ບ້ານເກີດເຮົາ.....................................5
6. ຂັບທຸ້ມຫລວງພະບາງ: ອະນາຄົດຂອງຊາດ................6
7. ລຳຄອນສະຫວັນ: ສົມເປັນຜູ້ສືບທອດ.....................7
8. ຂັບພວນ: ຮ່ວມແຮງຮ່ວມໃຈ................................8
9. ລຳຕັ່ງຫວາຍ: ມ່ວນຊື່ນໃນການຮຽນ.........................9
10. ລຳລ່ອງ: ນີ້ລະຈົ່ງສົມຊື່ວ່າຄົນ............................10



## *ລຳຕັ່ງຫວາຍ: " ມ່ວນຊື່ນໃນການຮຽນ "*

*ຄຳເອີຍ!

ມາເດີຊຸມເດີແມ່ນຊາວເຊື້ອ
ປຸ້ມລຸມກັນເດີແມ່ນຕອບໄດ້
ນັກຮຽນເຮົາເຂົ້າຮວມກຸ່ມ
ຄຳຖາມແທ້ເຈົ້າແຫ່ງຄູ
ມາໄວເດີຊຸມເຮົາເອີຍ(2)

*ໂອນໍ

ເຈົ້າຢ່າມົວເດີລົມກັນແທ້
ມີແຕ່ລົມເດີເຈົ້າຫຼ່ງງແທ້
ອີ່ຫຼີໄດ່ຊຸມເຮົາໜາ
ໄວໆເດີຄົ້ນຄິດແດ່
ລົມຫຼິ້ນເຈົ້າບໍດີ
ຫາງຕາຮຽມບໍ່ໄລເອີຍ

*ແມ່ນວ່າ

ຍາມຢູ່ໃນໂຮງຮຽນວ່ານັ້ນ
ຍາມສອບເສັງເຮົາຈຶ່ງຊິໄດ້
ຂະຫຍັນພຽນນໍຮຽນໃຫ້ເກ່ງ
ສົມແມ້ງແມ່ນດັ່ງໃຈ
ຕັ້ງໃຈຮຽນໃຫ້ດີນາ

*ເພິ່ນວ່າ

ຍາມລຳມາເດີເຈົ້າເຖິງໜີ້
ຂໍໂຈະກອນເຮົາໄວ້ບ່ອນນີ້
ລາລົງພຽງເທົ່ານີ້ນາ
ຕັ່ງຫວາຍຄຳນີ້ຂໍລາກ່ອນ
ກອນໜ້າຈຶ່ງຄ່ອຍຟັງ
ໂອຍລາລົງແລ້ວ.

## *ຂັບພວນ: " ຮ່ວມແຮງຮ່ວມໃຈ "*

*ໂອນໍ ຮຽມຂໍໄຂຄຳເວົ້າ    ເປັນກອນເຈົ້າຊ້ອນສົ່ງ
ໃຫ້ແກ່ພີ່ງພີ່ນ້ອງ    ຊາວເຊື້ອໝູ່ເຮົາພີ່ນ້ອງເອີຍ
*ເພິ່ນວ່າ ເພິ່ນວ່າການຮຽນຮູ້    ເຮົາມີຄູເພິ່ນສອນສັ່ງ
ແຕ່ວ່າ ຍັງໜຶ່ງນັ້ນ    ຜູ້ຊູຊວ້ານແມ່ນປະຊາເດີເຈົ້ານາ
*ໂອນໍ ພໍ່ແມ່ເດັກວ່ານັ້ນ    ຕ້ອງສຸມໃສ່ນຳກັນ
ຂະຫຍັນພຽນແພງຮັກ    ຊ່ວຍກັນຕິດຕາມໄວ້
ໃຫ້ໝູ່ຊຸມເດັກນ້ອຍ    ເອົາໃຈຮຽນສືບຕໍ່
ບົດເຝິກຫັດທີ່ໄດ້    ນັກຮຽນນັ້ນຕ້ອງໃສ່ໃຈ ເດີເຈົ້າເອີຍ
*ໂອນໍ ການຈະເຮັດໃຫ້ໄດ້    ຕ້ອງມາຮ່ວມໃຈກັນ
ທັງຄອບຄົວຊຸມຊົນ    ພ້ອມພໍ່າໂຮງຮຽນນັ້ນ
ຕ້ອງພາກັນຊູຊວ້ານ    ນຳກັນມັນຈຶ່ງຄ່ອງ
ເພື່ອໃຫ້ຊຸມໝູ່ນ້ອງ    ນັກຮຽນນັ້ນກ້າວເກັ່ງດີ ເດີທ່ານເອີຍ

ລາລົງທໍ່ນີ້ນາ.



## *ລຳເພີນ:" ຫ່ວງເພື່ອນ "*

(ເປີດ)ລະຟັງຍິນສຽງແຄນຈ້າວ    ຝາກລຳລາວຮ້ອງສົ່ງ
ເຖິງອານິງ ຜູ້ທີ່ຮຽນຫ່ວງນັ້ນ    ໄປນອນລີ້ຢູ່ບ່ອນໃດ
ຝາກສຽງລຳສົ່ງໃຫ້    ໃຫ້ເຈົ້າຕ່າວຄືນມາ
ມາຮ່ຳຮຽນສຶກສາ    ຢ່າຊູ່ລາ....ການຮຽນນັ້ນ
(ລຳເພີນ) ໂອຍ…ເດນໍ
ເປັນຫ່ວງຫຼາຍ    ຜູ້ທີ່ໄລໄກບ້ານ
ຜູ້ໄກເຮືອນຊານ    ອອກໂຮງຮຽນໄກຫ່າງ
ເຈົ້າຜູ້ໄກຫ່າງຂ້ອຍ    ຄວາມນ້ອຍບໍ່ຈາ
ບອກແລ້ວນາ    ຢ່າໄດ້ເຊື່ອກິນລວງ(x2)
ພວກນີ້ມັນຈອງຫອງ    ຊັກຊວນຊຸມເຈົ້າ
ເລີຍຫຼົງເຂົ້າ    ກິນລວງດຶງຈ່ອງ
ໃຫ້ລືມໄລພວກພ້ອງ    ໜີຮ້າງຫ່າງຮຽນ
ຄິດໃຫ້ຜ່ຽນ    ຈົ່ງຟ້າວດ່ວນກັບສາ(ຊ້ຳ)
ຍັງບໍ່ສວາຍເກີນໄປ    ໃຫ້ຕ່າວຄືນມາທ້ອນ(2)
ໂອຍເດນໍ ຟັງເດີເຈົ້າ    ຜູ້ລາໄລໄກຖິ່ນ
ຄັນໄດ້ຍິນຮຽກຮ້ອງ    ຕີນເຈົ້າໃຫ້ຕ່າວມາ
ເພື່ອນຢູ່ຖ້າ    ໃນລະຫວ່າງການຮຽນ(2)
ຍັງພາກພຽນສຶກສາ    ໃຫ້ຕ່າວມາເດີເຈົ້າ (ຊ້ຳ)

## ລຳເຕີ້ຍ: " ຕັ້ງໃຈໄວ້ທັ້ນລະດີ "

ຟັງເຖີດ ພີ່ນ້ອງທັງຫຼາຍ
ຂໍອະທິບາຍ ເລື່ອງການຮ່ຳຮຽນ
ຂໍຈົ່ງ ຕັ້ງໃຈພາກພຽນ
ຕັ້ງໃຈຮ່ຳຮຽນ ໃຫ້ໄດ້ທຸກຢ່າງ
ຮຽນຮູ້ເຮັດເປັນ ໃຫ້ເປັນຄົນເດັ່ນໃນການສຶກສາ
ເກັ່ງແລ້ວ ບໍອະວິຊາ
ພວກເຮົານັ້ນໜາ ຕ້ອງຊ່ວຍສັງຄົມ (ຊ້ຳ)
*ກະຈັ່ງຊິສົມຄົນແທ້ ເປັນຄົນລາວກ້າວໜ້າໄປກ່ອນ
ບໍອອນຊອນ ນຳໝູ່ຄົນຂີ້ຄ້ານ(x2)
ການບ້ານ ບໍ່ລຳແລ
ຈົດຈຳ ເອົາໄວ້ໃຫ້ດີ
ເຮົາຈະສຸກຂີ ຍ້ອນການຮ່ຳຮຽນ
ຄົນໃດ ທີ່ບໍ່ພາກພຽນ
ບໍອ່ານບໍຂຽນ ເປັນຄົນມັກກ່າຍ
ກ່າຍເພື່ອນກ່າຍຝຸງ ກ່າຍຕາມຕຳລາ
ບໍແມ່ນລຳຫາເລື່ອງ ຫາລາວເດີຈ້າວມາໃສ່
ຈົ່ງຕັ້ງໃຈ ຮ່ຳຮຽນຮອບຮູ້
ຈື່ງຊູຊວ້ານ ຊາດປະຊາ
ໂອຍນັ້ນລະນາ ຄົນຟັງນີ້ນາ(ຊ້ຳ)
ຈົ່ງສາມັກຄີເຈົ້າກັນໄວ້ ຕ້ອງຈຳໃສ່ໃຈຮ່ຳຮຽນເດີ(2)



## ລຳຄອນສະຫວັນ: " ສົມເປັນຜູ້ສືບທອດ "

ອົ່ງຕົ່ງແກ້ມເຈົ້າດອກອົ່ງຕົ່ງ ຢ່າໄດ້ຫຼົງດອກທາງເດີນບ່ອນ
ເພິ່ນແນບທາງໄວ້
ບັດນີ້ ເຮົາແມ່ນຄົນໜຸ່ມນ້ອຍ ຜູ້ເກີດໃໝ່ພາຍຫຼັງ
ຊີວິດຍັງສົດໃສ ເບິ່ງໄກເຫັນກວ້າງ
ເປັນທີ່ຫວງແຫນແທ້ ລຸງອາພໍ່ແມ່
ເປັນຄົນດີທ່ຽງແທ້ ເປັນຫຼານຫຼ້າແຫ່ງຕະກຸນ
ຈັ່ງວ່າ ຍາມເຈົ້າເປັນເດັກນ້ອຍ ຊອຍວອຍຂື້ນໃໝ່
ສະໝອງຍັງປອດໃສ ກຳລັງແຮງກໍແມ່ນໄດ້ໃຈກ້າ
ເກ່ງດີ
ອັນວ່າ ຕ້ອງຕັ້ງໃຈເຖີດຫຼ້າ ໃນການຮ່ຳຮຽນວິຊາ
ຢ່າໄດ້ເສຍເວລາ ປ່ອຍໄປໃຫ້ເສຍລ້າ
ຝຸງຢາອີຢາບ້າ ຢ່າໄປວຽນຢ່າໄປມົ່
ມັນຈະພາໝູ່ເຈົ້າ ເປັນບ້າປ່ວງບໍ່ເຊົາ
ຈັ່ງວ່າ ຂໍໃຫ້ພວກໝູ່ເຈົ້າ ສືບທໍ່ແທນແນວ
ເປັນລູກຫຼານທີ່ແສນດີ ສືບຕະກຸນເອົາໄວ້
ແມ່ນວ່າ ຂໍລາໄລດອກເດີເຈົ້າ ຄອນສະຫວັນຊິໄດ້ຕ່າວ
ຂໍໃຫ້ຊາວພີ່ນ້ອງ ທັນຫ້າວຄູ່ຊູ່ຄົນໂອລະນໍ

## *ຂັບທຸ້ມຫຼວງພະບາງ " ອະນາຄົດຂອງຊາດ"*

ໂອເຈົ້າແກ້ມປິ່ນວິ່ນ    ແສນຍິນດີເດັກລາວເຮົານາ
ທີ່ພ້ອມກັນສຶກສາ    ຊອກຫາວິຊາຄວາມຮູ້
ບັດນີ້ນາ    ເຮົາຕ້ອງມາຊ່ວຍກັນຊູຊ້ອານ
ເສີມຄວາມຮູ້    ໃຫ້ຫານກ້າກ້າວເກັ່ງດີ
ເພື່ອໃຫ້ມີວິທີ    ສ້າງຊີວິດໃໝ່ຈະເລີນກ້າວ
    ເຈົ້າດອກງໆເອີຍ (ຊໍ້າ)    …ເອີ…..ເອີຍ………
ໂອລະວ່າເຈົ້າດອກ    ກະຖິນ
ພວກເຮົານີ້ແສນມ່ວນຍິນ    ທຸກທົ່ວທ້ອງຖິ່ນດິນລາວນີ້ເອີຍ
ເອີ…..ເອີຍເຈົ້າແກ້ມ (ຊໍ້າ)    ລະເປັນສີອຸ່ມຫຸ່ມ
ພວກເຮົາພາກພູມໃຈ    ໃຫ້ຄົນຮຸ່ນໃໝ່ເກ່ງດີມີຄ່າ

(ຮ້ອງ 2 ເທື່ອ)



## *ລຳພູ່ໄທ: " ຈົ່ງຮັກໃນການຮຽນ "*

ໂອ້ຍ……ນໍ
ບັດນີ້ ຮຽນຍາກຂໍບອກເຈົ້າ    ເດັກລາວສະໄໝໃໝ່
ຍຸກສະໄໝກ້າວໜ້າ    ພາເຈົ້າກ້າວດຸ່ງເດີນແທ້ໜາ….
ຄຳເອີຍ ເຮົາເປັນເດັກໜຸ່ມນ້ອຍ    ເກີດໃໝ່ລຸນຫຼັງ
ຍັງບໍ່ມີແນວຄິດ    ເບິ່ງໄກເຫັນກວ້າງ
ໂອນໍ ຂໍໃຫ້ອົດທົນສູ້    ການຮຽນໃຫ້ມັນເກ່ງ
ເສັງໃຫ້ໄດ້ຮອບດ້ານ    ການຮຽນນັ້ນຈຶ່ງວ່າດີແທ້ນາ
ຄຳເອີຍ ຢ່າມົວເມົາແຕ່ນຳຫຼິ້ນ    ການຮຽນເຈົ້າປະປ່ອຍ
ຫຼອຍໄປມີຄູ່ຊ້ອນ(2)    ເຮືອນຊານນັ້ນບໍ່ຕ່າວເມືອ
    ນ້ອງເອີຍ….(2)
ຄຳເອີຍ ພໍແຕ່ມາເຖິງນີ້    ລຳພູ່ໄທຊິລາກ່ອນ(2)
ຂໍອວຍພອນໃຫ້ພວກນ້ອງ(2)    ຟັງແລ້ວໃຫ້ຮ່ຳຮອນນ້ອງເອີຍ
ລາແລ້ວລາແລ້ວ

## ລຳສາລະວັນ: " ຮຽນແລ້ວ, ຮຽນອີກ "

ໂອ່ຍ........ໂອຍ........ໂອຍ......ນາ
*ໂອຍນໍ
ເຊີນເຈົ້າຟັງເອົາທ້ອນ          ຟັງກອນຊິໄດ້ວ່າ ກ່ອນແລ້ວ
*ໂອນໍ
ການສຶກສາວ່ານັ້ນ          ບໍ່ສຸດສິ້ນບອນໃດຄືນໄຕເອີຍ

ກ້າວໄປສາລະວັນກ້າວໄປກ້າວໄປພວກເຮົາຈົ່ງກ້າວໄປ
ກ້າວໄປສາລະວັນກ້າວໄປ

*ໂອນໍ ເພິ່ນວ່າການຮຽນຮູ້          ມີທັງຄູສອນສັ່ງ ນັ້ນແລ້ວ
*ໂອນໍ ແຕ່ວ່າຍັງບໍ່ແລ້ວ          ຕ້ອງຮຽນຮູ້ຕື່ມກັນພິງພັນເອີຍ

ກ້ຽວກັນສາລະວັນກ້ຽວກັນ(3)

*(ເຕີ້ຍ) ຈັ່ງວ່າລະຊຸມຊົນເອີຍ          ໃຜບໍ່ເຄີຍຮຽນຮູ້
ລອງມາ          ນໍເຈົ້າຮຽນເບິ່ງ
ມັນບໍ່ເຫິງ          ດອກລະເດີພີ່ນ້ອງ
ຕ້ອງຮຽນຮູ້          ຕື່ມບໍ່ເຊົາ
ໂອຍນັ້ນລະນາ          ຂວັນໃຈນີ້ເອີຍ (ຊໍ້າ)
ຢ່າຫຼີງຢ່າເລີຍ          ມາຮຽນຮູ້

ລາລິງສາລະວັນລາລິງ (3)



## ລຳເດີນ: " ບ້ານເກີດເຮົາ "

(ເປີດ) ຄິດຮອດຫຼາຍ          ຍາມໄກບ້ານໄກເຮືອນຊານ
          ບ້ານເຄີຍຢູ່
ໂອຍ ຄິດຮອດເດ          ທັງພໍ່ຕູ້ແມ່ຕູ້
ຜູ້ເຄີຍໄດ້          ເຈົ້າລຳແຍງໂອຍ...ລະນາ
* (ເດີນ) ເສົ້າໃຈ          ຍາມໄກບ້ານຢູ່
ໃຈທົດທູ່          ເຖິງແຕ່ຄວາມຫຼັງ
ຄິດຮອດ          ບ່ອນທີ່ເຄີຍຍັ້ງ
ພາບຄວາມຫຼັງ          ຍັງຈຳຕິດຕາ
* ບໍ່ລືມ          ໄຮ່ນາເຄີຍດຳ
ຈື່ຈຳ          ຄຳແມ່ສັ່ງມາ
ບໍລືມພີ່ນ້ອງ          ອາວອາ
ຈາກບ້ານມາ          ຍັງຄິດເຖິງບໍ່ລືມ
* ວັນຄືນເສົ້າ          ເຫງົາໃຈອຸກອັ່ງ
ພາບຄວາມຫຼັງວ່ານັ້ນ          ຈຳໝັ້ນຊູ່ແນວ
ຄິດບໍ່ແລ້ວ          ນຳບ້ານເກົ່າຄາວຫຼັງ
ໄປຢູ່ວຽງວັງໃດ          ກໍບໍ່ຄືຢູ່ນຳເຈົ້າ

(ຮ້ອງ 2 ເທື່ອ)